ຕົວຢ່າງຜົນງານທີ່ທາງລິຂະສິດໄດ້ຮັບການປົກປ້ອງ ພາຍໃຕ້ກົດໝາຍ ຂອງສປປ ລາວ:

1. *ຜົນງານດ້ານສິລະປະກໍາເຊັ່ນ: ຮູບແຕ້ມ, ຮູບແກະສະຫຼັກ, ການອອກແບບ, ຮູບຖ່າຍ, ຮູບຈໍາລອງ, ແຜນທີ່, ດົນຕີປະກອບຕ່າງໆ, ການອອກແບບທ່າຟ້ອນ, ທ່າເຕັ້ນ, ທໍານອງດົນຕີ, ບັນທຶກສຽງເປັນຕົ້ນ, ຮູບເງົາ ແລະ ສຽງປະກອບຮູບເງົາ.*

2. *ຜົນງານດ້ານວັນນະກໍາເຊັ່ນ: ປຶ້ມອ່ານ, ວິທະຍານິພົນ, ວາລະສານ, ບົດປາຖະຄະຖາ, ບົດຄໍາເຫັນ, ບົດຄໍາສອນ, ບົດລະຄອນ, ບົດເລື່ອງ, ໂປແກຼມຄອມພິວເຕີ ແລະ ການລວບລວມຂໍ້ມູນເປັນຕົ້ນ.*

## III. ການນໍາໃຊ້ ແລະ ການໂອນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ

ເຈົ້າຂອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດສາມາດນໍາໃຊ້, ໃຫ້ເຊົ່າ ຫຼື ໂອນສິດຂອງຕົນບາງສ່ວນ ຫຼື ທັງໝົດໃຫ້ຜູ້ອື່ນ. ນອກຈາກນັ້ນ ຍັງມີສິດຫ້າມຜູ້ອື່ນນໍາໃຊ້ຜົນງານຂອງຕົນ.

ການເຮັດສັນຍາໃຫ້ເຊົ່າ ຫຼື ໂອນສິດດັ່ງກ່າວ ແມ່ນໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ (ກົດໝາຍໃດແດ່?).

## IV. ການລະເມີດລິຂະສິດ

ການນໍາໃຊ້ລິຂະສິດທີ່ຖືວ່າເປັນການລະເມີດສິດປະກອບມີການອ້າງອີງຜົນງານ, ສື່ປະກອບການການຮຽນການສອນ (ສໍາເນົາໃນການຮຽນ ຫຼື ສອນ), ຊີ້ບອກແຫຼ່ງທີ່ມາຂອງຜົນງານ ແລະ ຊື່ເຈົ້າຂອງຜົນງານບາງສ່ວນຂອງບົດຄວາມ ແລະ ທັງສ່ວນຂອງຜົນງານທີ່ກະຈາຍອອກອາກາດ ແລະ ຜົນງານທີ່ໄດ້ເຫັນ ແລະ ໄດ້ຟັງຈາກເຫດການປະຈໍາວັນຕ່າງໆ.

## V. ມາດຕະການປົກປ້ອງ ແລະ ລົງໂທດຕໍ່ຜູ້ລະເມີດ

ເພື່ອໃຫ້ສອດຄ່ອງກັບສັນຍາ TRIPS, ສປປ ລາວ ໄດ້ປັບປຸງກົດໝາຍວ່າດ້ວຍຊັບສິນທາງປັນຍາສະບັບໃໝ່ ປີ 2011 ຊຶ່ງໄດ້ກໍານົດມາດຕະການຕ່າງໆເພື່ອຮັບປະກັນຄວາມສັກສິດຂອງການປົກປ້ອງທີ່ກ່າວມານັ້ນ. ໃນກໍລະນີລະເມີດລິຂະສິດ ແລະ ສິດກ່ຽວຂອງກັບລິຂະສິດ, ຜູ້ລະເມີດອາດຈະຖືກມາດຕະການທາງແພ່ງ ຫຼື ທາງອາຍາກໍ່ເປັນໄດ້ ຕາມແຕ່ກໍລະນີ.

ນອກນັ້ນ, ຍັງໄດ້ກໍານົດມາດຕະການຊາຍແດນ ເຊິ່ງເຈົ້າຂອງສິດ ສາມາດຮ້ອງຂໍໃຫ້ເຈົ້າໜ້າທີ່ພາສີປະຈໍາດ່ານນໍາເຂົ້າສິນຄ້າ ຢຶດສິນຄ້າທີ່ສົງໄສວ່າລະເມີດລິຂະສິດ.

ລາຍລະອຽດກ່ຽວກັບ ການປົກປ້ອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ແມ່ນໄດ້ກໍານົດໄວ້ ໃນ ກົດໝາຍວ່າດ້ວຍຊັບສິນທາງປັນຍາ ຂອງ ສປປ ລາວ ປີ 2011. ກົດໝາຍດັ່ງກ່າວ ສາມາດເຂົ້າເຖິງໄດ້ໃນເວັບໄຊຂອງສະພາແຫ່ງຊາດ ທີ່ www.na.gov.la ແລະ ສາມາດຕິດຕໍ່ ສອບຖາມລາຍລະອຽດການຈັດຕັ້ງປະຕິບັດກົດໝາຍດັ່ງ ກ່າວໄດ້ທີ່ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ.

**ສົນໃຈຂໍ້ມູນເພີ່ມເຕີມ**

ກົມນະໂຍບາຍການຄ້າຕ່າງປະເທດ
ກະຊວງອຸດສາຫະກໍາ ແລະ ການຄ້າ
Tel: 201 450065
Fax: 021-450066
Email: foreigntrade@laoftpd.com
www.laoftpd.com

**ສະໜັບສະໜູນໂດຍ:**

USAID FROM THE AMERICAN PEOPLE



### *ຊັບສິນທາງປັນຍາ: ເລື່ອງໃກ້ຕົວໂຕທ່ານ*

# ຄວາມຮູ້ເພີ່ມເຕີມກ່ຽວກັບ ລິຂະສິດ ແລະ ສິດກ່ຽວຂ້ອງ ກັບລິຂະສິດ



## I. ຄວາມສຳຄັນ ແລະ ຂອບເຂດໂດຍຫຍໍ້ຂອງການປົກປ້ອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ

ປະຈຸບັນ ຂະແໜງອຸດສາຫະກຳບັນເທີງ ຂອງ ສປປ ລາວ ກຳລັງເຕີບໃຫຍ່ຂະຫຍາຍຕົວຢ່າງໄວວາ ໂດຍສະເພາະແມ່ນວົງການເພງ ແລະ ການສະແດງຮູບເງົາ; ພ້ອມນັ້ນ, ໃນວົງການຂຽນບົດປະພັນ, ປຶ້ມນິຍາຍ, ປຶ້ມອ່ານຕ່າງໆ ກໍໄດ້ມີການພັດທະນາຂຶ້ນຢ່າງເຫັນໄດ້ຊັດເຈນ. ສະນັ້ນ, ສິ່ງສຳຄັນທີ່ຄຽງຄູ່ກັບການພັດທະນາຂະແໜງດັ່ງກ່າວ ແມ່ນການພັດທະນາກົດໝາຍ ເພື່ອປົກປ້ອງສິດອັນຊອບທຳຂອງຜູ້ເປັນເຈົ້າຂອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ.

ການປົກປ້ອງ ກວມເອົາສິດທາງດ້ານເສດຖະກິດ ຫຼື ສິດທີ່ໂອນໄດ້ (Economic Rights) ຂອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ (ຊຸກຍູ້ໃຫ້ຄຳນຶງເຖິງສິດທາງດ້ານສິລະທຳ) ຫຼື ສິດທີ່ໂອນບໍ່ໄດ້ (Moral Rights) ຂອງຜູ້ປະດິດຄິດແຕ່ງ ແລະ ຜູ້ສ້າງ ສັນຜົນງານທີ່ໄດ້ອຸທິດສະຕິປັນຍາ, ເຫື່ອແຮງ, ເວລາ ແລະ ທຶນຮອນ ເພື່ອປະດິດຄິດແຕ່ງ ແລະ ສ້າງສັນຜົນງານມາຮັບໃຊ້ສາທາລະນະຊົນ ແລະ ສັງຄົມ.

ການປົກປ້ອງດັ່ງກ່າວ ຈະເປັນການຊຸກຍູ້ສົ່ງເສີມການປະດິດຄິດແຕ່ງ ແລະ ສ້າງສັນຜົນງານເຮັດໃຫ້ ພູມປັນຍາໂດຍສະເພາະດ້ານສິລະປະກຳ, ວັນນະກຳ ແລະ ຄອມພິວເຕີສາດ ມີຄວາມອຸດົມສົມບູນ ແລະ ກ້າວໜ້າຂຶ້ນເລື້ອຍໆ.

ໂດຍທົ່ວໄປແລ້ວ, ຜູ້ປະດິດຄິດແຕ່ງ ແລະ ຜູ້ສ້າງສັນຜົນງານແມ່ນໄດ້ຮັບປະໂຫຍດຈາກຜົນງານຂອງຕົນ ດ້ວຍຄ່າຕອບແທນຈາກການໃຫ້ນຳໃຊ້ສິດທາງດ້ານເສດຖະກິດຕໍ່ຜົນງານຂອງຕົນ ເຊັ່ນ: ໃຫ້ສິດຜະລິດ, ຈັດພິມ, ສຳເນົາ ຫຼື ຜະລິດຊ້ຳຄືນອີກ.

ລາຍໄດ້ຈາກການຊື້ຂາຍລິຂະສິດ ແລະ ສິດກ່ຽວ ຂ້ອງກັບລິຂະສິດ ແລະ ຜົນປະໂຫຍດຈາກການນຳໃຊ້ສິດ ດັ່ງກ່າວ ຍັງເປັນການສ້າງມູນຄ່າເພີ່ມໃຫ້ແກ່ເສດຖະກິດແຫ່ງຊາດ.

ໃນດ້ານຫຼັກການ ການປົກປ້ອງ ແມ່ນການຈັດຕັ້ງປະຕິບັດມາດຕາ 17, 23 ແລະ 24 ຂອງລັດຖະທຳມະນູນ ແຫ່ງ ສປປ ລາວ ກ່ຽວກັບການປົກປ້ອງສິດຕໍ່ກຳມະສິດ, ການສົ່ງເສີມການປະດິດຄິດແຕ່ງ, ການປະດິດຄິດສ້າງ ແລະ ການປົກປ້ອງຊັບສິນທາງປັນຍາ. (update ຂໍ້ມູນຈາກກົດໝາຍວ່າດ້ວຍຊັບສິນທາງປັນຍາ 2011ຕື່ມ)

ການປົກປ້ອງຍັງແມ່ນ ໜຶ່ງໃນເງື່ອນໄຂທີ່ສຳຄັນໃນການເຂົ້າເປັນສະມາຊິກອົງການການຄ້າໂລກ ຂອງ ສປປ ລາວ ຊຶ່ງໄດ້ລະບຸໄວ້ໃນສັນຍາວ່າດ້ວຍສິດຕໍ່ຊັບສິນທາງປັນຍາ ໃນດ້ານທີ່ຕິດພັນກັບການຄ້າ (ຫຼື Agreement on Trade Related Aspects of Intellectual Property Rights ຫຼື TRIPS Agreement). ສັນຍາດັ່ງກ່າວໄດ້ກຳນົດລາຍລະອຽດ ແລະ ຮູບແບບຂອງການປົກປ້ອງລະຂະສິດ ແລະ ສິດທີ່ກ່ຽວຂ້ອງກັບລິຂະສິດ ເພື່ອໃຫ້ສະມາຊິກຂອງອົງການການຄ້າໂລກປະຕິບັດຕາມຢ່າງເປັນເອກະພາບ.



ການປົກປ້ອງດັ່ງກ່າວຍັງເປັນເງື່ອນໄຂອຳນວຍຄວາມສະດວກໃນການເຂົ້າເປັນພາຄີຂອງສົນທິສັນຍາເບີນ (ຫຼື Berne Convention) ທີ່ສປປ ລາວ ໄດ້ຖືກຮັບຮອງໃຫ້ເປັນພາຄີຂອງສົນທິສັນຍາດັ່ງກ່າວໃນເດືອນມີນາ ປີ 2012.

## II. ເງື່ອນໄຂ ແລະ ໄລຍະເວລາການປົກປ້ອງ

ພາຍໃຕ້ກົດໝາຍວ່າດ້ວຍຊັບສິນທາງປັນຍາສະບັບປີ 2011, ເຈົ້າຂອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດມີສິດໄດ້ຮັບການປົກປ້ອງໂດຍບໍ່ຈຳເປັນຕ້ອງຈົດທະບຽນຄືກັບຊັບສິນທາງປັນຍາປະເພດອື່ນ; ສິດທີ່ໄດ້ຮັບ ແມ່ນສິດນຳໃຊ້ ແລະ ສິດຫ້າມຜູ້ອື່ນນຳໃຊ້ຜົນງານຂອງຕົນ.

ຜົນງານທີ່ຈະໄດ້ຮັບການປົກປ້ອງ ຕ້ອງມີຄົບຕາມເງື່ອນ ໄຂທີ່ກົດໝາຍໄດ້ກຳນົດໄວ້. ຕົວຢ່າງ: ຜົນງານທີ່ຈະໄດ້ຮັບການປົກປ້ອງລິຂະສິດ ຕ້ອງແມ່ນການປະດິດຄິດແຕ່ງທີ່ເປັນ ຕົ້ນສະບັບຂອງແທ້ ແລະ ເປັນຜົນງານອອກມາໃນຮູບແບບຕ່າງໆ ເຊັ່ນ: ການບັນທຶກ ຫຼື ການຂີດຂຽນຕ່າງໆ, ການປັ້ນ, ການຄວັດ, ການສະແດງອອກ ແລະ ອື່ນໆ. ສະນັ້ນ, ແນວຄິດ (Ideas) ທີ່ບໍ່ມີການສ້າງເປັນຜົນງານອອກມາແມ່ນບໍ່ໄດ້ຮັບການປົກປ້ອງ.

ການປົກປ້ອງ ແມ່ນມີຂອບເຂດຈຳກັດດ້ານເວລາ. ຕົວຢ່າງ: ອາຍຸການປົກປ້ອງລິຂະສິດ ແມ່ນຊ່ວງໄລຍະຊີວິດຂອງຜູ້ປະດິດຄິດແຕ່ງບວກເພີ່ມ 50 ປີ.